ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ໂຮງຮຽນອະນຸບານ ທຫລ ສະເຫຼີມສະຫຼອງວັນເດັກນ້ອຍສາກົນ




ໃນວັນທີ 31 ພຶດສະພາ 2022 ໄດ້ຈັດພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ ທີ່ໂຮງຮຽນອະນຸບານທະນາຄານແຫ່ງ ສປປ ລາວ ໂດຍການເປັນປະທານຂອງ ທ່ານ ນ. ມະນີວອນ ບັນດາສັກ ວ່າການຫົວໜ້າໂຮງຮຽນອະນຸບານທະນາຄານ ເຊິ່ງເປັນການຈັດສະເພາະນັກຮຽນ ແລະ ຄູອາຈານ ເຊິ່ງມີຕາງໜ້າ 03 ອົງການຈັດຕັ້ງມະຫາຊົນຂອງຫ້ອງການ ທຫລ ເຂົ້າຮ່ວມຕະຫຼອດຮອດຄູອາຈານ ແລະ ຫຼານນ້ອຍໂຮງຮຽນອະນຸບານ.





ຈຸດປະສົງຂອງການຈັດງານໃນຄັ້ງນີ້ ເພື່ອເປັນການສະເຫຼີມສະຫຼອງວັນເດັກນ້ອຍສາກົນຄົບຮອບ 98 ປີ ເຊິ່ງໃນພິທີດັ່ງກ່າວໄດ້ມີການຈັດບາສີສູ່ຂວັນໃຫ້ຫຼານນ້ອຍ ແລະ ຄູອາຈານ ໂຮງຮຽນອະນຸບານ ທຫລ ເພື່ອເປັນສິລິມຸງຄຸນຕາມຮີດຄອງປະເພນີ. ໃນໂອກາດດັ່ງກ່າວ, ຍັງໄດ້ມີການສະແດງສິລະປະຂອງຫຼານນ້ອຍຊັ້ນອະນຸບານ 2 ແລະ ຊັ້ນອະນຸບານ 3 ເຊິ່ງມີການສະແດງປະກອບດ້ວຍ: 1. ອະນຸບານ 2 (ກ) ເຕັ້ນປະກອບເພງວັນເດັກນ້ອຍສາກົນ; 2. ອະນຸບານ 2 (ຂ) ຟ້ອນປະກອບເພງ 01 ມິຖຸນາໃນດວງໃຈ; 3. ອະນຸບານ 2 (ຄ) ເຕັ້ນປະກອບເພງຫຼານຮັກທ່ານຜູ້ນຳ; 4. ອະນຸບານ 3

(ກ) ຟ້ອນປະກອບເພງປ່າໄມ້ສົດຊື່ນ; 5. ອະນຸບານ 3 (ຂ) ເຕັ້ນປະກອບເພງກົບນ້ອຍ ແລະ 6. ອະນຸບານ 3 (ຄ) ເຕັ້ນປະກອບເພງເພື່ອນທີ່ຮູ້ໃຈ. ຫຼັງຈາກຈົບການສະແດງ, ໄດ້ມີການມອບຂອງຂວັນໃຫ້ຫຼານນ້ອຍທຸກຄົນເພື່ອເປັນຂອງຂວັນວັນເດັກນ້ອຍສາກົນ ແລະ ເພື່ອເປັນຂອງລາງວັນໃນການສະແດງດັ່ງກ່າວ ໃຫ້ກຳລັງໃຈແກ່ຫຼານນ້ອຍທຸກຄົນ.





#ຂ່າວ ແລະ ພາບໂດຍ: ນາງ ທິດສະບາ ທຳມະວົງສິງ

## ຊາດພັດທະນາພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ